

# ການເຕັ້ນເຮກິນໂບທໍາ (DANCE HEGINBOTHAM)

## ກ່ຽວກັບ ການເຕັ້ນເຮກິນໂບທໍາ

ການເຕັ້ນເຮກິນໂບທໍາ ໄດ້ສ້າງຕົວເອງຂຶ້ນຢ່າງໄວວາໃຫ້ເປັນໜຶ່ງໃນບໍລິສັດໃໝ່ທີ່ມີຄວາມທ້າທາຍ ແລະ ໜ້າຕື່ນເຕັ້ນທີ່ສຸດຢູ່ໃນສາກການເຕັ້ນສະໄໝໃໝ່ຂອງອາເມຣິກາ.

ຜູ້ກໍ່ຕັ້ງ ແລະ ຜູ້ອໍານວຍການສິລະປິນ ທ່ານ ຈອນ ເຮກິນໂບທໍາ (John Heginbotham) ເປັນທີ່ຮູ້ຈັກກັນດີທີ່ສຸດຢູ່ໃນການດໍາລົງຕໍາແໜ່ງຂອງທ່ານເປັນເວລາ 14 ປີໃນການເປັນນັກເຕັ້ນກັບກຸ່ມເຕັ້ນ ມາກ ມໍຣິສ (Mark Morris Dance Group). ບໍລິສັດເຊິ່ງຕັ້ງຢູ່ໃນເມືອງບຣຸກລິນໄດ້ຮັບການສະເຫຼີມສະຫຼອງຄວາມຕະຫຼົກຂົບຂັນ, ການລະຄອນ, ແລະ ສີມືທາງດ້ານກິລາທີ່ມີຊີວິດຊີວາ, ພ້ອມທັງຄໍາໝັ້ນສັນຍາຂອງຕົນເອງຕໍ່ກັບການຮ່ວມມື; ວຽກທີ່ຜ່ານມາໄດ້ສະແດງກັບຄະນະດົນຕີ ອາລາມ ເວວ ຊາວ (Alarm Will Sound) ແລະ ບຣຸກຣິນໄຣເດີ (Brooklyn Rider).

## ກອງປະຊຸມສໍາມະນາ ແລະ ການຂະຫຍາຍ

ເນື່ອງຈາກໄດ້ຮັບການກໍ່ຕັ້ງໃນປີ 2011, ບໍລິສັດໄດ້ຮັກສາການເນັ້ນໃສ່ການສ້າງຄວາມເປັນຫຸ້ນສ່ວນສິລະປະທີ່ເຂັ້ມແຂງ ແລະ ປັດຊະຍາມະນຸດຂອງຊຸມຊົນ, ຂັບເຄື່ອນຢູ່ໃນບາງສ່ວນໂດຍການກໍ່ຕັ້ງທີ່ດີຂອງ ທ່ານ ເຮກິນໂບທໍາ ຍ້ອນເປັນທີ່ຮູ້ຈັກກັນດີວ່າທ່ານເປັນຜູ້ສຶກສາສິລະປະໃຫ້ກັບທຸກລະດັບ, ອາຍຸ, ແລະພື້ນຖານ. ທ່ານ ເຮກິນໂບທໍາ ແມ່ນສະມາຊິກກໍ່ຕັ້ງການເຕັ້ນໃຫ້ກັບ PD®—ສໍາລັບຄົນທີ່ເປັນພະຍາດປາຣ໌ກິນສັນ (Parkinson). ຜ່ານການມີສ່ວນຮ່ວມກັບສິ່ງນີ້ ແລະສິ່ງອື່ນ, ທ່ານ ເຮກິນໂບທໍາ ແລະ ບໍລິສັດຂອງລາວພະຍາຍາມຢ່າງເປັນພິເສດ ເພື່ອນໍາເອົາການສຶກສາກ່ຽວກັບການເຕັ້ນມາໃຫ້ກັບຜູ້ເຂົ້າຮ່ວມທີ່ມີຄວາມສາມາດທີ່ຫຼາກຫຼາຍ.

## ກ່ຽວກັບຜູ້ອໍານວຍການສິລະປະ

ທ່ານ ຈອນ ເຮກິນໂບທໍາ(John Heginbotham) ຈົບມາຈາກ ຈິວລີອາດ (Juilliard) ໃນປີ 1993 ແລະ ເປັນສະມາຊິກຂອງ ກຸ່ມເຕັ້ນ ມາກ ມຣໍຣິດ(Mark Morris Dance Group) ຕັ້ງແຕ່ປີ 1998 ຫາ 2012. ໃນປີ 2011 ທ່ານໄດ້ກໍ່ຕັ້ງ ການເຕັ້ນ ເຮກິນໂບທໍາ (Dance Heginbotham), ກຸ່ມນັກສະແດງໄດ້ອຸທິດຕົນໃຫ້ແກ່ການສະແດງການເຕັ້ນຂອງລາວ ແລະ ວຽກດ້ານລະຄອນ. ຍ້ອນເປັນນັກບັນຊາການເຕັ້ນເອກະລາດທີ່ມີຕ້ອງການສູງ, ທ່ານ ຈອນໄດ້ບັນຊາການເຕັ້ນໃຫ້ຫຼາຍໂຄງການເອກະລາດ, ລວມທັງຫຼາຍໂອເປີຣາ, ແລະ ຫຼ້າສຸດແມ່ນຜົນງານໃໝ່ໃຫ້ແກ່ອັດແລນຕາບັລເລ່. ທ່ານ ເຮກິນໂບທໍາ ນໍາເອົາດົນຕີສົດເຂົ້າໃນວຽກຂອງລາວຢູ່ເລື້ອຍໆ, ດ້ວຍການຮ່ວມມືກັບ ທ່ານ ອາລາມ ເວວ ຊາວ (Alarm Will Sound), ນັກດົນຕີ ອໍເຄັສຕຣາຄລາສິກຊາວອາເມຣິກາ, ທ່ານ ບຣຸກລິນ ໄຣເດີ (Brooklyn Rider), ຟິດເຊີສ໌ປູນເນີ (Fischerspooner), ເຣມອນ ສ໌ກອດ ອໍເຄສ໌ເຕຣັດ (Raymond Scott Orchestrette), ທາຍຍອນໄດ ແບຣກຕອນ (Tyondai Braxton), ໂຄລິນ ເຈຄອບເຊັນ (Colin Jacobsen), ເກບຣຽວ ກາເຮນ (Gabriel Kahane), ແລະ ຊາຣາ ວໍເດນ (Shara Worden), ຢູ່ໃນຈໍານວນກຸ່ມອື່ນໆ. ທ່ານເປັນຜູ້ໄດ້ຮັບລາງວັນການເຕັ້ນໝອນຂອງ ເຈຄອັບ (Jacob's Pillow Dance) ໃນປີ 2014 ແລະ ໄດ້ຮັບທຶນ ຈາກ ອົງການໃຫ້ທຶນ ເຈີໂຣມ ຣອບບິນສ໌ ຫຼື ມີຊື່ພາສາອັງກິດວ່າ (Jerome Robbins Foundation New Essential Works (NEW)) 2 ຄັ້ງໃນປີ 2010 ແລະ 2012.

ທ່ານ ເຮກິນໂບທໍາ ໄດ້ຮັກສາຊື່ສຽງໃນການເອົານັກຮຽນເຕັ້ນທຸກອາຍຸ ແລະ ທຸກຄວາມສາມາດເຂົ້າຮ່ວມ. ທ່ານຢູ່ໃນຄະນະ ຂອງມະຫາວິທະຍາໄລ ພຣິນເຊຕອນ (Princeton University) ແລະ ໄດ້ກໍານົດງານໃຫ້ນັກຮຽນຢູ່ທີ່ສະຖາບັນທາງການສຶກສາ ລວມທັງວິທະຍາໄລ ບາຣນາດ (Barnard College) ແລະ ດາດເມົາທ໌ (Dartmouth College). ທ່ານໄດ້ສອນຫຼັກສູດປະລິນຍາໂທໃນທົ່ວໂລກ ແລະ ເປັນອາຈານກໍ່ຕັ້ງການເຕັ້ນ (Dance) ໃຫ້ກັບ PD®, ເຊິ່ງມີການສືບຕໍ່ການຮ່ວມມືກັນລະຫວ່າງ ກຸ່ມເຕັ້ນ ມາກ ມໍຣິດ(Mark Morris Dance Group) ແລະ ກຸ່ມ ບຣຸກລິນ ພາກກິນສັນ (Brooklyn Parkinson Group) ສໍາລັບຄົນທີ່ເປັນພະຍາດ ປາຣ໌ກິນສັນParkinson.

## ຂ່າວ

"[ທ່ານມີ] ສັນຊາດຕະຍານຂອງນັກສິລະປິນດ້ານລະຄອນໃນການຄວບຄຸມຜູ້ຊົມຂອງລາວ" —*ເດີ ນິວຢອກ ໄທມ໌*

"ຈິດໃຈຂອງ ຈອນ ເຮກິນໂບທໍາ(John Heginbotham) ແມ່ນສະຖານທີ່ວິເສດບ່ອນໜຶ່ງ... ຜູ້ຊົມມີໂອກາດເຂົ້າສູ່ໂລກແຫ່ງການໃຫ້ຄວາມບັນເທີງຂອງ ທ່ານ ເຮກິນໂບທໍາ , ສະນັ້ນ ເຂົາເຈົ້າບໍ່ຄວນພາດ... ຜົນງານຂອງລາວຄືກັບວ່າມີຄວາມເປັນຕົວເຂົາເຈົ້າເອງ. ທີ່ທ່ານຢາກຈະທໍາຄວາມຮູ້ຈັກ." —*ເດີ ນິວຢອກເກີ*

"...ບຸກຄະລິກທີ່ເປັນນັກສິລະປິນການເຕັ້ນລໍາທີ່ເຂັ້ມແຂງ – ການປະສົມທີ່ມີຊີວິດຊີວາ ຂອງການທີ່ບໍ່ເປັນທາງການ ແລະ ຄວາມມີຫຼັກການ , ຄວາມບ້າ ແລະ ຄວາມຈິງໃຈ..." —*ເດີ ນິວຢອກເກີ*

## ວິດີໂອ

Excerpt from *Chalk and Soot*
Excerpt from *Twin*
Excerpts from *Manhattan Research*
Excerpt from *Closing Bell*

## ເບິ່ງເພີ່ມເຕີມ

danceheginbotham.org
facebook.com/danceheginbotham
instagram.com/danceheginbotham